ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ: 3905 /ກງ

ນະຄອນຫຼວງວຽງຈັນ, ວັນທີ: 22 NOV 2016

# ຄຳແນະນຳ
# ວ່າດ້ວຍການເກັບກຳ ແລະ ສຳຫຼວດ ຖານລາຍຮັບງົບປະມານ ຄືນໃໝ່ ໃນຂອບເຂດທົ່ວປະເທດ

ເຖິງ: - ບັນດາທ່ານ ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການລັດ ທຽບເທົ່າກະຊວງ,
- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007;
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການເກັບກຳ ແລະ ສຳຫຼວດຖານລາຍຮັບງົບປະມານຄືນໃໝ່ ໃນຂອບເຂດທົ່ວປະເທດ ສະບັບເລກທີ 40/ນຍ, ລົງວັນທີ 29 ກັນຍາ 2016.

ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ເນື້ອໃນຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 40/ນຍ,ລົງວັນທີ 29 ກັນຍາ 2016 ໃຫ້ເປັນເອກະພາບ ແລະ ການເກັບກຳສັງລວມຂໍ້ມູນໃຫ້ສອດຄ່ອງ ຕາມຈຸດປະສົງ ລະດັບຄາດໝາຍ, ເປັນບ່ອນອີງອັນໜັກແໜ້ນໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ໂດຍສະເພາະ ແຜນໃນການສ້າງລາຍຮັບງົບປະມານແຫ່ງລັດ ໃຫ້ຖືກຕ້ອງສອດຄ່ອງກັບຄວາມເປັນຈິງໃນແຕ່ລະໄລຍະ.

**ລັດຖະມົນຕີກະຊວງການເງິນ ອອກຄຳແນະນຳ:**

## I. ຈຸດປະສົງ

ຄຳແນະນຳສະບັບນີ້ ວາງອອກ ເພື່ອເປັນການຜັນຂະຫຍາຍເນື້ອໃນ ຄຳສັ່ງນາຍົກລັດຖະມົນຕີ ວ່າດ້ວຍການເກັບກຳ ແລະ ສຳຫຼວດ ຖານລາຍຮັບງົບປະມານຄືນໃໝ່ ໃນຂອບເຂດທົ່ວປະເທດ ສະບັບເລກທີ 40/ນຍ, ລົງວັນທີ 29 ກັນຍາ 2016 ແລະ ເພື່ອເປັນບ່ອນອີງໃຫ້ແກ່ບັນດາຂະແໜງການຂັ້ນສູນກາງ ແລະ ອຳນາດການປົກຄອງທ້ອງຖິ່ນ ໃນການເກັບກຳ ແລະ ສຳຫຼວດ ຖານລາຍຮັບງົບປະມານຄືນໃໝ່ໃນຂອບເຂດທົ່ວປະເທດ ແນໃສ່ເຮັດໃຫ້ການຄຸ້ມຄອງຈັດເກັບລາຍຮັບງົບປະມານແຫ່ງລັດ ຄົບຖ້ວນ, ຖືກຕ້ອງຕາມລະບຽບກົດໝາຍກຳນົດ, ມີປະສິດທິພາບສູງ ແລະ ບັນລຸຕາມແຜນການທີ່ສະພາແຫ່ງຊາດຮັບຮອງ ແຕ່ລະໄລຍະ.

## II. ລະດັບຄາດໝາຍ

1. ເກັບກຳຂໍ້ມູນ ບັນດາຫົວໜ່ວຍທຸລະກິດ ໃນຂອບເຂດ ທີ່ບັນດາຂະແໜງການ ແລະ ທ້ອງຖິ່ນຄຸ້ມຄອງ ໂດຍສຸມໃສ່ບັນດາທຸລະກິດຂະໜາດໃຫຍ່, ກາງ ແລະ ຂົງເຂດທີ່ເຫັນວ່າຍັງມີການຮົ່ວໄຫຼ, ຄຸ້ມຄອງບໍ່ຮັດກຸມ ແລະ ອື່ນໆ;

2. ເກັບກຳຖານລາຍຮັບງົບປະມານສ່ວຍສາອາກອນ, ພາສີ, ຊັບສິນ, ຄ່າທຳນຽມ, ລາຍຮັບວິຊາການ, ລາຍຮັບກອງທຶນຂອງລັດ, ວິສາຫະກິດລັດລົງທຶນ, ກິດຈະການທີ່ຂຶ້ນກັບຄະນະກຳມະການຄຸ້ມຄອງເຂດເສດຖະກິດພິເສດ-ເສດຖະກິດສະເພາະ, ກິດຈະການຂອງລັດໃຫ້ພາກສ່ວນອື່ນເຊົ່າ, ການຄຸ້ມຄອງເງິນກູ້ຢືມຕ່ຳ ແລະ ອື່ນໆ ທີ່ມີໃນປະຈຸບັນ ແລະ ຄາດຄະເນຖານລາຍຮັບໃຫຍ່ຕາມທ່າແຮງບົ່ມຊ່ອນຂອງຕົນໃນຕໍ່ໜ້າ;

3. ແຍກໃຫ້ໄດ້ຖານລາຍຮັບງົບປະມານ ທີ່ມີຄວາມໝັ້ນທ່ຽງຍືນຍົງ, ຕົ້ນຕໍ ແລະ ຖານລາຍຮັບທີ່ເກີດຂຶ້ນຊົ່ວຄາວ ຫຼື ລັກສະນະບັງເອີນ ແຕ່ລະໄລຍະ ເພື່ອໃຫ້ການຄຸ້ມຄອງ ແລະ ວາງແຜນລາຍຮັບຖືກຕ້ອງ, ຊັດເຈນ;

4. ເກັບກຳ ແລະ ສຳຫຼວດ ຂໍ້ມູນລາຍຮັບຈາກຊັບພະຍາກອນທຳມະຊາດ , ຄ່າສຳປະທານ, ຄ່າພາກຫຼວງ, ລາຍຮັບຈົດທະບຽນ, ລາຍຮັບຈາກຄ່າເຊົ່າທີ່ດິນ-ສິ່ງກໍ່ສ້າງຂອງລັດ, ລາຍຮັບຈາກຄ່າຫັນເຮືອນ ແລະ ທີ່ດິນຂອງລັດໄປສູ່ກຳມະສິດອື່ນ;

5. ເກັບກຳ ແລະ ສຳຫຼວດ ເນື້ອທີ່ດິນ, ສິ່ງປຸກສ້າງຂອງລັດ ແລະ ຊັບສິນຂອງລັດອື່ນໆ ທີ່ລັດໃຫ້ສຳປະທານ ໂດຍແຍກໃຫ້ໄດ້ ຂັ້ນສູນກາງ ອານຸຍາດ ແລະ ຂັ້ນທ້ອງຖິ່ນ ອະນຸຍາດ;

6. ເກັບກຳ ແລະ ສຳຫຼວດ ຂໍ້ມູນທຸລະກິດຂະແໜງພະລັງງານ ແລະ ບໍ່ແຮ່, ໃນນີ້ ຕ້ອງແຍກໃຫ້ໄດ້ ຈຳນວນເຂື່ອນໄຟຟ້າ, ການລົງທຶນເຂົ້າໃນເຂື່ອນໄຟຟ້າ, ອາຍຸການສຳປະທານ, ຄາດຄະເນການຊຳລະອາກອນ, ເງິນປັນຜົນ ແລະ ພັນທະອື່ນໆ ຂອງແຕ່ລະໂຄງການ; ສຳລັບທຸລະກິດບໍ່ແຮ່ ແຍກໃຫ້ໄດ້ ຈຳນວນໂຄງການທີ່ອະນຸຍາດໃຫ້ສຳຫຼວດ, ໂຄງການທີ່ອະນຸຍາດໃຫ້ຂຸດຄົ້ນ ແລະ ພັນທະຕ່າງໆ ທີ່ຕ້ອງໄດ້ມອບ ຕາມສັນຍາການສຳປະທານ;

7. ຄາດຄະເນຖານລາຍຮັບໃໝ່ ທີ່ເປັນທ່າແຮງບົ່ມຊ້ອນຂອງຂະແໜງການສູນກາງ ແລະ ທ້ອງຖິ່ນຂອງຕົນ ແລະ ຖານລາຍຮັບເກົ່າ ທີ່ຈະຂະຫຍາຍຕົວອອກເປັນຖານໃຫຍ່ໃນຕໍ່ໜ້າ;

8. ຄົ້ນຄວ້າ ແລະ ສະເໜີປັບປຸງ ບັນດານິຕິກຳ, ກົງຈັກການຈັດຕັ້ງ ແລະ ກົນໄກການຄຸ້ມຄອງ ທີ່ກ່ຽວຂ້ອງ ເພື່ອເປັນການຊຸກຍູ້ສົ່ງເສີມ ການຂະຫຍາຍຖານລາຍຮັບ ແລະ ຮັບປະກັນ ການຄຸ້ມຄອງເກັບລາຍຮັບໃຫ້ມີປະສິດທິຜົນ ແລະ ບໍ່ມີການຮົ່ວໄຫຼ;

9. ສັງລວມ ບັນດາຫົວໜ່ວຍທຸລະກິດ ແລະ ບັນດາຖານລາຍຮັບງົບປະມານ ທີ່ເກັບກຳໄດ້ ໃຫ້ເປັນລະບົບຄົບຊຸດ ຂອງຂະແໜງການ ແລະ ທ້ອງຖິ່ນ ແລະ ລວມສູນຢູ່ກະຊວງການເງິນ ເພື່ອເປັນຂໍ້ມູນໃນການຄົ້ນຄ້ວາ, ຄາດຄະເນລາຍຮັບ ໃນແຕ່ລະໄລຍະ ໃຫ້ຖືກຕ້ອງ ແລະ ຊັດເຈນ.

## III. ຂັ້ນຕອນ ແລະ ວິທີການຈັດຕັ້ງປະຕິບັດ

1. ໃຫ້ຂະແໜງການຂັ້ນສູນກາງ ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ຄະນະວິຊາການ ເກັບກຳ ແລະ ສຳຫຼວດ ຖານຫົວໜ່ວຍທຸລະກິດ ແລະ ຖານລາຍຮັບງົບປະມານ ຢູ່ພາຍໃນຂະແໜງ ການ ທີ່ຂຶ້ນກັບຄວາມຮັບຜິດຊອບຄຸ້ມຄອງຂອງຕົນ, ສົມທົບກັບຄະນະວິຊາການທີ່ຖືກແຕ່ງຕັ້ງຈາກກະຊວງການເງິນ ເພື່ອດຳເນີນການເກັບກຳ ແລະ ສຳຫຼວດຖານຫົວໜ່ວຍທຸລະກິດ ແລະ ຖານລາຍຮັບງົບປະມານ ຕາມລະດັບຄາດໝາຍທີ່ກຳນົດໄວ້ຂ້າງເທິງ;

2. ໃຫ້ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ແຕ່ງຕັ້ງຄະນະຮັບຜິດຊອບຊີ້ນຳລວມ ແລະ ຄະນະວິຊາການ ໂດຍປະກອບມີ ຜູ້ຕາງໜ້າຈາກຂະແໜງການທີ່ກ່ຽວຂ້ອງເຂົ້າຮ່ວມໃນຄະນະດັ່ງກ່າວຕາມຄວາມເໝາະສົມ, ສົມທົບກັບຄະນະວິຊາການທີ່ຖືກແຕ່ງຕັ້ງຈາກກະຊວງການເງິນ ເພື່ອເກັບກຳ ແລະ ສຳຫຼວດ ຖານຫົວໜ່ວຍທຸລະກິດ ແລະ ຖານລາຍຮັບງົບປະມານ ຢູ່ພາຍໃນທ້ອງຖິ່ນ ທີ່ຂຶ້ນກັບຄວາມຮັບຜິດຊອບຄຸ້ມຄອງຂອງຕົນ;

3. ໃຫ້ຂະແໜງພາສີ, ຂະແໜງສ່ວຍສາອາກອນ, ຂະແໜງຄຸ້ມຄອງຊັບສິນຂອງລັດ ແລະ ຂະແໜງຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ອອກຄຳແນະນຳ ແລະ ແບບສອບຖາມ ໃນການເກັບກຳ ແລະ ສຳຫຼວດ ຂໍ້ມູນຫົວໜ່ວຍທຸລະກິດ ແລະ ຖານລາຍຮັບງົບປະມານ ທີ່ພົວພັນກັບຂະແໜງຂອງຕົນຢ່າງລະອຽດ, ຄົບຖ້ວນ ແລະ ຊັດເຈນ;

4. ຄະນະວິຊາການທີ່ຖືກແຕ່ງຕັ້ງຈາກກະຊວງການເງິນ ຮີບຮ້ອນປະສານສົມທົບກັບບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອສັງລວມ ແລະ ສະຫຼຸບ ລາຍງານໃຫ້ທັນຕາມກຳນົດເວລາ;

5. ໃຫ້ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ດຳເນີນການ ເກັບກຳ ແລະ ສຳຫຼວດ ຂໍ້ມູນຫົວໜ່ວຍທຸລະກິດ ແລະ ຖານລາຍຮັບງົບປະມານ ຂອງຂະແໜງການ ແລະ ທ້ອງຖິ່ນຕົນ ໂດຍການສ້າງແຜນລະອຽດ ໃຫ້ມີແຜນງານ, ແຜນເງິນ, ແຜນຄົນ ແລະ ກຳນົດເວລາເດີນສຳຫຼວດຢ່າງຊັດເຈນ, ການສຳຫຼວດໃຫ້ລົງຮອດຂັ້ນເມືອງ ຢ່າງມີຈຸດສຸມ, ປະຢັດ ແລະ ມີປະສິດທິຜົນຈາກນັ້ນ ໃຫ້ສະຫຼຸບ ແລະ ກວດກາ ຂໍ້ມູນທີ່ເກັບກຳໄດ້ມານັ້ນ ຖືກຕ້ອງ, ຄົບຖ້ວນ, ຊັດເຈນ ແລະ ຕອບສະໜອງ ຄວາມຕ້ອງການຕາມຈຸດປະສົງ;

## IV. ເນື້ອໃນເກັບກຳຂໍ້ມູນ

1. ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ເກັບກຳ ແລະ ສຳຫຼວດ ຂໍ້ມູນລາຍຮັບຂອງບັນດາຫົວໜ່ວຍທຸລະກິດ ແລະ ຖານລາຍຮັບງົບປະມານ ທີ່ຂະແໜງການຂອງຕົນອານຸມັດ, ຄຸ້ມຄອງ, ຄ່າທຳນຽມ, ລາຍຮັບວິຊາການ, ລາຍຮັບຂອງກອງທຶນ ແລະ ອື່ນໆ;

2. ຂະແໜງສ່ວຍສາອາກອນ ເກັບກຳ ແລະ ສຳຫຼວດຂໍ້ມູນລາຍຮັບຈາກ ບັນດາຫົວໜ່ວຍທຸລະກິດທີ່ແຈ້ງເສຍອາກອນຕາມລະບອບການຖືບັນຊີ ແລະ ລະບອບມອບເໝົາ ໂດຍແຍກປະເພດລາຍ

ຮັບຕາມຂະແໜງການ ຄື: ຂະແໜງການຜະລິດ, ຂະແໜງການຄ້າ ແລະ ຂະແໜງການບໍລິການ, ຂໍ້ມູນຫົວໜ່ວຍພື້ນຖານການໃຫ້ເຊົ່າຊັບສິນຕ່າງໆ ໃນການເກັບອາກອນຄ່າເຊົ່າ, ຄ່າທຳນຽມ, ຄ່າບໍລິການ, ບັນດາກອງທຶນຂອງອົງການຈັດຕັ້ງບໍລິຫານ-ວິຊາການ ແລະ ຂໍ້ມູນກ່ຽວກັບການເກັບພາສີທີ່ດິນ ເພື່ອເປັນຂໍ້ມູນພື້ນຖານໃນການຄາດຄະເນລາຍຮັບຈາກຂະແໜງສ່ວຍສາອາກອນ ໃຫ້ມີຄວາມຖືກຕ້ອງ, ຊັດເຈນ ແລະ ຮັບປະກັນບໍ່ໃຫ້ມີການຮົ່ວໄຫຼ;

3. ຂະແໜງພາສີ ເກັບກຳ ແລະ ສຳຫຼວດຂໍ້ມູນ ທີ່ເປັນແຫຼ່ງໃນການຈັດເກັບລາຍຮັບພາສີ ເຊັ່ນ: ພາສີຂາເຂົ້າ-ຂາອອກ, ຄ່າປັບໃໝ, ຂາຍເຄື່ອງຮິບ ແລະ ປະເພດຄ່າທຳນຽມຕ່າງໆ; ພ້ອມດຽວກັນນີ້ກໍ່ຕ້ອງແຍກໃຫ້ໄດ້ໝວດສິນຄ້າຕົ້ນຕໍເຊັ່ນ: ນ້ຳມັນເຊື້ອໄຟ, ພາຫະນະ, ສິ້ນສ່ວນອາໄຫຼ່, ເຄື່ອງໃຊ້ໄຟຟ້າ, ສິນຄ້າອຸປະໂພກ-ບໍລິໂພກ, ສິນຄ້ານຳເຂົ້າເພື່ອການສົ່ງອອກ ແລະ ສິນຄ້າອື່ນໆ;

4. ຂະແໜງຄຸ້ມຄອງຊັບສິນຂອງລັດ ເກັບກຳ ແລະ ສຳຫຼວດ ຂໍ້ມູນລາຍຮັບຈາກຊັບ ພະຍາກອນທຳມະຊາດ ເຊັ່ນ: ໄມ້ທີ່ຍັງຄ້າງບໍ່ທັນໄດ້ຂາຍ, ເຄື່ອງປ່າຂອງດົງ, ຄ່າສຳປະທານເພື່ອຊອກຄົ້ນ, ສຳຫຼວດຂຸດຄົ້ນແຮ່ທາດ ແລະ ຄ່າສຳປະທານທີ່ດິນ ເພື່ອການກະສິກຳ, ອຸດສາຫະກຳ, ບໍລິການ ແລະ ທ່ອງທ່ຽວ, ຄ່າພາກຫຼວງ, ລາຍຮັບຈົດທະບຽນ, ລາຍຮັບຈາກຄ່າເຊົ່າທີ່ດິນ-ສິ່ງກໍ່ສ້າງຂອງລັດ, ການຂາຍຊັບສິນຂອງລັດ, ລາຍຮັບຈາກການຕັດສິນຂອງສານຮິບເປັນຂອງລັດ, ລາຍຮັບຄ່າຫ້ອງເຮືອນ ແລະ ທີ່ດິນຂອງລັດ, ພ້ອມດຽວກັນນັ້ນ ກໍ່ໃຫ້ເກັບກຳຂໍ້ມູນຊັບສິນຂອງລັດທີ່ບຸກຄົນ, ນິຕິບຸກຄົນ ນຳໃຊ້ປະຈຸບັນ ແຕ່ຍັງບໍ່ທັນໄດ້ປະຕິບັດພັນທະໃຫ້ລັດ ຊຶ່ງຄາດວ່າຈະສາມາດສ້າງເປັນແຫຼ່ງລາຍຮັບໃໝ່ໄດ້ ເປັນຕົ້ນ: ການນຳໃຊ້ດິນເພື່ອຕັ້ງຫຼັກສັນຍານໂທລະຄົມ, ປ້າຍໂຄສະນາ ແລະ ອື່ນໆ;

5. ຂະແໜງຄຸ້ມຄອງວິສາຫະກິດລັດລົງທຶນ ແລະ ການປະກັນໄພ ເກັບກຳ ແລະ ສຳຫຼວດ ຂໍ້ມູນຈຳນວນຫົວໜ່ວຍລັດວິສາຫະກິດ ແລະ ວິສາຫະກິດປະສົມ, ຈຳນວນທຶນ ແລະ ຊັບສິນທີ່ລັດວິສາຫະກິດ ແລະ ວິສາຫະກິດປະສົມຄຸ້ມຄອງ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ.

## V. ການສະຫຼຸບລາຍງານ

1. ຄະນະວິຊາການທີ່ຖືກແຕ່ງຕັ້ງລົງເກັບກຳ ແລະ ສຳຫຼວດ ຖານລາຍຮັບງົບປະມານແຫ່ງລັດ ຂອງບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ ສະຫຼຸບ, ລາຍງານ ແລະ ສົ່ງຂໍ້ມູນທີ່ເກັບກຳ ແລະ ສຳຫຼວດໄດ້ ໃຫ້ກະຊວງການເງິນ ພາຍໃນວັນທີ 30/12/2016;

2. ກະຊວງການເງິນ ສະຫຼຸບ, ສັງລວມ, ວິເຄາະ, ວິໄຈ ຂໍ້ມູນ ທີ່ເກັບກຳ ແລະ ສຳຫຼວດໄດ້ ລາຍງານລັດຖະບານ ພາຍໃນ 30 ວັນ ຫຼັງຈາກທີ່ໄດ້ຮັບຂໍ້ມູນນຳບັນດາກະຊວງ, ອົງການທຽບເທົ່າກະຊວງ, ບັນດາແຂວງ ແລະ ນະຄອນຫຼວງ.

## VI. ງົບປະມານຮັບໃຊ້

ສໍາລັບງົບປະມານຮັບໃຊ້ ໃນການເກັບກໍາ ແລະ ສໍາຫຼວດຖານລາຍຮັບງົບປະມານແຫ່ງລັດຄືນໃໝ່ ໃນຂອບເຂດທົ່ວປະເທດຄັ້ງນີ້ ແມ່ນນໍາໃຊ້ງົບປະມານ ສະເພາະທີ່ສູນກາງອານຸມັດໃຫ້ ສົມທົບກັບງົບປະມານຂອງຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນຕົນເອງ, ຮັບປະກັນໃຫ້ມີການປະຢັດ, ບັນລຸໄດ້ຕາມລະດັບໝາຍ ແລະ ມີປະສິດທິຜົນສູງສຸດ.

ດັ່ງນັ້ນ, ຈຶ່ງອອກຄໍາແນະນໍາສະບັບນີ້ ເພື່ອຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນສໍາເລັດ ຢ່າງມີປະສິດພາບ ແລະ ປະສິດທິຜົນ.

ຮອງນາຍົກລັດຖະມົນຕີ
ລັດຖະມົນຕີກະຊວງການເງິນ

ສົມດີ ດວງດີ